ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0907/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 14/07/2020

# ແຈ້ງການ

ຮຽນ: ທ່ານຜູ້ຖືຮຸ້ນ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື,

ເລື່ອງ: ແຈ້ງວາລະກອງປະຊຸມ, ວັນ-ເວລາ, ສະຖານທີ່ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.

- ອີງຕາມການຕົກລົງເຫັນດີຂອງກອງປະຊຸມສະພາບໍລິຫານ ສະໄໝວິສາມັນຄັ້ງທີ 3/2020, ຄັ້ງວັນທີ 14/07/2020.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຂໍຖືເປັນກຽດ ແຈ້ງມາຍັງທ່ານເພື່ອຊາບດັ່ງນີ້:

1. ກຳນົດວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020 ມີດັ່ງນີ້:

   ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2019.

   ວາລະທີ 2: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຜູ້ອຳນວຍການໃຫຍ່ຜູ້ໃໝ່ ພ້ອມດ້ວຍຄະນະ ເພື່ອປ່ຽນແທນຜູ້ອຳນວຍການໃຫຍ່ຜູ້ເກົ່າພ້ອມດ້ວຍຄະນະ ທີ່ເຂົ້າກະສຽນບຳເນັດ.

   ວາລະທີ 3: ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຮອງປະທານສະພາບໍລິຫານ ແລະ ກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນຜູ້ເກົ່າທີ່ເຂົ້າກະສຽນບຳເນັດ, ການກຳນົດຜູ້ທີ່ມີອຳນາດໃນການລົງລາຍເຊັນຜູກພັນບໍລິສັດ ແລະ ອາຍຸການຂອງບັນດາກຳມະການສະພາບໍລິ ຫານບໍລິສັດ

   ວາລະທີ 4: ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບຂອງບໍລິສັດມາດຕາ 09 ວ່າດ້ວຍກຳມະການ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.

   ແລະ (1) ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການກຳນົດລາຍລະອຽດ ແລະ ເງື່ອນໄຂຕ່າງໆທີ່ຈຳເປັນ ກ່ຽວກັບການກະກຽມເປີດກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020 ໄດ້ທຸກປະການ, ລວມທັງໃຫ້ມີອຳນາດໃນການດຳເນີນການໃດໜຶ່ງ ອັນຈຳເປັນ ລວມທັງການກະກຽມເອກະສານຕ່າງໆ ແລະ ດຳເນີນການໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ; ແລະ

   (2) ກຳນົດຜູ້ຕາງໜ້າຜູ້ຖືຮຸ້ນໃນການຮັບໃບມອບສັນທະຄື: ທ່ານ ຄຳແກ້ວ ວິສີສົມບັດ, ທ່ານ ນາງ ທະວີຈັນ ທ່ຽງເທບວົງສາ ແລະ ທ່ານ ຣສ. ປອ. ພູເພັດ ກ້ຽວພິລາວົງ ກຳມະການອິດສະຫຼະ ເປັນຜູ້ມອບຮັບສັນທະຈາກຜູ້ຖືຮຸ້ນ.

2. ກຳນົດວັນປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020 ໃນວັນທີ 24 ກໍລະກົດ 2020 ເວລາ 15:00 ໂມງ ທີ່ຫ້ອງປະຊຸມຊັ້ນ 01, ອາຄານສຳນັກງານໃຫຍ່ຂອງລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ. ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກ

ຜູ້ອຳນວຍການໃຫຍ່ ເປັນຜູ້ມີອຳນາດພາຍໃຕ້ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ໃນການແກ້ໄຂ ວັນ-ເວລາ ແລະ ສະຖານທີ່ປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2020.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ.

ຮຽນມາດ້ວຍຄວາມນັບຖື,

**ຜູ້ອຳນວຍການໃຫຍ່**

ພະລັງງານ ແລະ ບໍ່ແຮ່ ກະຊວງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company ນະຄອນ ຫຼວງ ວຽງຈັນ

ລັດຕະນາ ປະທຸມວັນ

ຖະໜົນມິດຕະພາບລາວ-ໄທ,ບ້ານທົ່ງກາງ,ເມືອງສີສັດຕະນາກ,ນະຄອນຫຼວງວຽງຈັນສປປລາວຕູ້ປ.ນ 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la, ເວັບໄຊສ: www.edlgen.com.la